ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ: 2575 /ກງ

ນະຄອນຫຼວງວຽງຈັນ, ວັນທີ: 10 AUG 2016

# ຂໍ້ຕົກລົງ
## ຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ
## ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ ຄ່າບໍລິການດຳເນີນການແຈ້ງພາສີ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ການຄົ້ນຄວ້ານຳສະເໜີຂອງກົມພາສີ ສະບັບເລກທີ 07419/ກພສ, ລົງວັນທີ 08 ກໍລະກົດ 2016.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກຂໍ້ຕົກລົງ :

**ມາດຕາ 1 : ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ໃນການຄຸ້ມຄອງ ແລະ ການນຳໃຊ້ ຄ່າບໍລິການທາງດ້ານວິຊາການທີ່ກ່ຽວຂ້ອງກັບການແຈ້ງພາສີ ຊຶ່ງກະຊວງການເງິນ ມອບໝາຍໃຫ້ລັດຖະການພາສີ ຄຸ້ມຄອງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ມີປະສິດທິຜົນ, ໂປ່ງໃສ, ສາມາດຕິດຕາມ ກວດກາ ແລະ ກວດສອບໄດ້, ແນໃສ່ເຮັດໃຫ້ການຄຸ້ມຄອງການເງິນຂອງລັດ ມີຄວາມເຂັ້ມແຂງ, ຊຸກຍູ້ ສົ່ງເສີມການພັດທະນາ, ປັບປຸງ ແລະ ທັນການຄຸ້ມຄອງວຽກງານພາສີເປັນທັນສະໄໝ ໃຫ້ສຳເລັດຜົນຕາມລະດັບຄາດໝາຍ ແລະ ມີຄວາມຍືນຍົງ, ເພີ່ມທະວີປະສິດທິພາບໃນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ລາຍຮັບ-ລາຍຈ່າຍ ຄ່າບໍລິການທາງດ້ານວິຊາການ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ມາດຕາ 2 : ຄ່າບໍລິການດຳເນີນການແຈ້ງພາສີ

ຄ່າບໍລິການດຳເນີນການແຈ້ງພາສີ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ປະກອບມີຄ່າບໍລິການ ທີ່ກຳນົດໃນຂໍ້ 4, ມາດຕາ 9 ຂອງລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 03/ສປປ, ລົງວັນທີ 26 ທັນວາ 2012 ເຊັ່ນ : ຄ່າບໍລິການນຳໃຊ້ລະບົບຄຸ້ມຄອງຂໍ້ມູນການແຈ້ງພາສີ (ອາຊີກຸດາ/ການບໍລິການແຈ້ງພາສີຜ່ານລະບົບເອເລັກໂຕຣນິກ), ຄ່າບໍລິການນຳໃຊ້ເຄື່ອງກວດກາດ້ວຍລະບົບສາຍແສງ, ຄ່າບໍລິການເອກະສານຜ່ານແດນສາກົນ ແລະ ອື່ນໆ ຊຶ່ງມອບໃຫ້ລັດຖະການພາສີຄຸ້ມຄອງຈັດເກັບ ແລະ ນຳໃຊ້ເຂົ້າໃນວຽກງານວິຊາການ-ວິຊາສະເພາະ ທີ່ຕິດພັນກັບການດຳເນີນການແຈ້ງພາສີເປັນລາຍລະອຽດ ໃນການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ.

ມາດຕາ 3 : ຫຼັກການພື້ນຖານໃນການຄຸ້ມຄອງ

ການຄຸ້ມຄອງຄ່າບໍລິການດຳເນີນການແຈ້ງພາສີ ຕ້ອງຮັບປະກັນຫຼັກການລວມສູນຢູ່ໃນບັນຊີເງິນຝາກສະເພາະຂອງກົມພາສີ ທີ່ເປີດໄວ້ຢູ່ໃນຄັງເງິນແຫ່ງຊາດ, ມີການສ້າງແຜນ ໂດຍຮັບປະກັນຫຼັກການດຸນດ່ຽງ, ມີການຄິດໄລ່, ໄລ່ລຽງລາຍຮັບ-ລາຍຈ່າຍ ສັງລວມເຂົ້າໃນແຜນງົບປະມານປະຈຳປີຂອງລັດຖະການພາສີ ແລະ ປະຕິບັດການ ຈົດຮັບ-ຈົດຈ່າຍ, ມີການຕິດຕາມ, ກວດກາ-ກວດການ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ຕາມລະບຽບການຄຸ້ມຄອງການໃຊ້ຈ່າຍເງິນງົບປະມານຂອງລັດ.

ມາດຕາ 4 : ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະສຳລັບການຄຸ້ມຄອງ ແລະ ນຳໃຊ້ ຄ່າບໍລິການດຳເນີນການແຈ້ງພາສີ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ມາດຕາ 5 : ການເກັບຄ່າບໍລິການ

ຄ່າບໍລິການດຳເນີນການແຈ້ງພາສີ ທີ່ກຳນົດໃນ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ແມ່ນໃຫ້ລັດຖະການພາສີ ດຳເນີນການຈັດເກັບຕາມອັດຕາທີ່ໄດ້ກຳນົດໄວ້ໃນ ຂໍ້ 4, ມາດຕາ 9 ຂອງລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 03/ສປປ, ລົງວັນທີ 26 ທັນວາ 2012, ໂດຍໃຫ້ຈັດເກັບນຳບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຜູ້ບໍລິການແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດທີ່ໄດ້ຮັບອະນຸຍາດໃຫ້ແຈ້ງພາສີ ໃນເວລາດຳເນີນການແຈ້ງພາສີເປັນລາຍລະອຽດຜ່ານລະບົບເອເລັກໂຕຣນິກເປັນແຕ່ລະຄັ້ງ ຕາມລຳດັບເລກທີໃບແຈ້ງພາສີເປັນລາຍລະອຽດ, ຕາມເລກທີໃບແຈ້ງພາສີເປັນລາຍລະອຽດທີ່ຖືກກວດກາຜ່ານເຄື່ອງກວດກາດ້ວຍລະບົບສາຍແສງ ແລະ ການບໍລິການເອກະສານສິນຄ້າຜ່ານແດນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ.

ມາດຕາ 6 : ການຍົກເວັ້ນ

ການຍົກເວັ້ນຄ່າບໍລິການລະບົບຄຸ້ມຄອງຂໍ້ມູນການແຈ້ງພາສີ ແມ່ນກໍານົດໃຫ້ສະເພາະລະບອບໃບແຈ້ງພາສີການນໍາເຂົ້າເຄື່ອງຍ່ອຍ ແລະ ລະບອບການເຄື່ອນຍ້າຍສິນຄ້າພາຍໃນ ຕາມການກໍານົດຂອງລັດຖະການພາສີ ກ່ຽວກັບການນໍາໃຊ້ເລກລະຫັດລະບອບໃບແຈ້ງພາສີເປັນລາຍລະອຽດ.

ກໍລະນີບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີການສະເໜີຂໍຍົກເວັ້ນຄ່າບໍລິການດໍາເນີນການແຈ້ງພາສີ ຕ້ອງໄດ້ຮັບອະນຸມັດຈາກກະຊວງການເງິນ.

ມາດຕາ 7 : ການມອບລາຍຮັບຄ່າບໍລິການ

ລັດຖະການພາສີແຕ່ລະຂັ້ນ ທີ່ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງຈັດເກັບຄ່າບໍລິການດໍາເນີນການແຈ້ງພາສີ ນໍາບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຜູ້ບໍລິການແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດ ທີ່ໄດ້ຮັບອະນຸຍາດໃຫ້ແຈ້ງພາສີ ໃນເວລາດໍາເນີນການແຈ້ງພາສີເປັນລາຍລະອຽດ ຕ້ອງມອບລາຍຮັບຄ່າບໍລິການດໍາເນີນການແຈ້ງພາສີທີ່ຈັດເກັບໄດ້ທັງໝົດ ເຂົ້າໃນບັນຊີເງິນຝາກຂອງກົມພາສີ ຢູ່ຄັງເງິນແຫ່ງຊາດ ເພື່ອຄຸ້ມຄອງການນໍາໃຊ້ໃຫ້ຖືກຕ້ອງ ສອດຄ່ອງຕາມການກໍານົດໃນລະບຽບການເງິນ.

ມາດຕາ 8 : ເປົ້າໝາຍການນໍາໃຊ້

ລາຍຮັບຄ່າບໍລິການດໍາເນີນການແຈ້ງພາສີ ສາມາດນໍາໃຊ້ເຂົ້າໃນບັນດາເປົ້າໝາຍ ເພື່ອການກະຕຸກຊຸກຍູ້, ສ້າງທຸກເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ການຫັນເປັນທັນສະໄໝໃນການຄຸ້ມຄອງວຽກງານພາສີ ແນໃສ່ເພື່ອເຮັດໃຫ້ການຈັດຕັ້ງຜັນຂະຫຍາຍການນໍາໃຊ້ລະບົບທັນສະໄໝສໍາເລັດຜົນຕາມລະດັບຄາດໝາຍ ແລະ ເພື່ອເປັນການຊ່ວຍໜູນການໃຊ້ຈ່າຍງົບປະມານຂອງລັດດັ່ງນີ້ :

1. ການບໍາລຸງຮັກສາ, ການປັບປຸງບູລະນະ, ການສ້ອມແປງ, ການປ່ຽນແທນສິ້ນສ່ວນ ແລະ ສ່ວນປະກອບ ຂອງເຄື່ອງອຸປະກອນທັນສະໄໝ, ການເກັບກູ້ຄືນລະບົບ;
2. ການພັດທະນາລະບົບອັດຕະໂນມັດ ແລະ ການຂະຫຍາຍການນໍາໃຊ້ເຄື່ອງມືອຸປະກອນ ແລະ ລະບົບທັນສະໄໝ ເພື່ອຮັບປະກັນໃຫ້ລະບົບ ສາມາດດໍາເນີນວຽກງານໄດ້ຢ່າງເປັນປົກກະຕິຕໍ່ເນື່ອງ, ມີຄວາມຍືນຍົງ ແລະ ການພັດທະນາສ້າງຖານຂໍ້ມູນ ສໍາລັບການເກັບຮັກສາຂໍ້ມູນທີ່ບັນທຶກເຂົ້າໃນລະບົບ;
3. ການຝຶກອົບຮົມ, ບໍາລຸງສ້າງບຸກຄະລາກອນ ເພື່ອສ້າງຄວາມອາດສາມາດດ້ານວິຊາການ, ວິຊາສະເພາະ ແລະ ວຽກງານຂໍ້ມູນຂ່າວສານ ( IT ) ລວມທັງການບໍາລຸງສ້າງ ຜູ້ນໍາໃຊ້ລະບົບ, ຜູ້ຄວບຄຸມລະບົບ ແລະ ຜູ້ພັດທະນາລະບົບ;

4. ການອຸດໜູນຕາມນະໂຍບາຍວຽກໜັກ ແລະ ທາດເບື່ອ ໃຫ້ພະນັກງານທີ່ຮັບຜິດຊອບວຽກງານຂໍ້ມູນຂ່າວສານ ( IT ) ຂອງລັດຖະການພາສີແຕ່ລະຂັ້ນ.

ການນຳໃຊ້ລາຍຮັບຄ່າບໍລິການດຳເນີນການແຈ້ງພາສີ ຕ້ອງປະຕິບັດໃຫ້ຖືກຕ້ອງ ຄົບຖ້ວນ ຕາມລະບຽບການເງິນ ຢ່າງເຂັ້ມງວດ.

ມາດຕາ 9 : ຂັ້ນຕອນ, ວິທີການຄຸ້ມຄອງ ແລະ ນຳໃຊ້ຄ່າບໍລິການດຳເນີນການແຈ້ງພາສີ

ລັດຖະການພາສີ ຕ້ອງໄດ້ດຳເນີນການຄຸ້ມຄອງ ແລະ ນຳໃຊ້ຄ່າບໍລິການດຳເນີນການແຈ້ງພາສີ ຕາມຂັ້ນຕອນ ແລະ ວິທີການ ດັ່ງນີ້ :

1. ສ້າງແຜນການ ລາຍຮັບ-ລາຍຈ່າຍ ກ່ຽວກັບຄ່າບໍລິການດຳເນີນການແຈ້ງພາສີເປັນແຕ່ລະສົກປີ ໃຫ້ແທດເໝາະກັບບັນດາໜ້າວຽກຕົວຈິງຂອງລັດຖະການພາສີ ເພື່ອນຳສະເໜີຕໍ່ກະຊວງການເງິນພິຈາລະນາ ແລ້ວຜ່ານສະພາແຫ່ງຊາດຮັບຮອງແຜນງົບປະມານປະຈຳສົກປີ;
2. ຄ່າບໍລິການດຳເນີນການແຈ້ງພາສີ ຕ້ອງມອບເຂົ້າບັນຊີເງິນຝາກຂອງກົມພາສີ ຢູ່ຄັງເງິນແຫ່ງຊາດ ໂດຍມີການສົມທຽບບັນຊີລາຍຮັບ ກັບຄັງເງິນແຫ່ງຊາດແຕ່ລະຂັ້ນ ແລະ ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ (ເດືອນ, ງວດ ແລະ ສົກປີ) ສົ່ງໃຫ້ກະຊວງການເງິນ ຕາມລະບຽບການທີ່ໄດ້ກຳນົດໄວ້;
3. ຈັດຕັ້ງປະຕິບັດລາຍຈ່າຍຄ່າບໍລິການດຳເນີນການແຈ້ງພາສີ ໃຫ້ສອດຄ່ອງກັບແຜນການ, ຖືກຕ້ອງຕາມຫຼັກການ, ລະບຽບການ ແລະ ຂັ້ນຕອນການເບີກຈ່າຍງົບປະມານຂອງລັດ, ປະກອບເອກະສານໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຮັບອະນຸມັດຈາກຜູ້ສັ່ງການຂອງຕົນ;
4. ປະຕິບັດການບັນທຶກບັນຊີ ລາຍຮັບ-ລາຍຈ່າຍ ຄ່າບໍລິການດຳເນີນການແຈ້ງພາສີ ຕາມລະບຽບການກຳນົດ;
5. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນ ລາຍຮັບ-ລາຍຈ່າຍ ຄ່າບໍລິການດຳເນີນການແຈ້ງພາສີ ໃນຂະແໜງການຕົນ ເພື່ອຮັບປະກັນປະສິດທິຜົນ ໃນການຄຸ້ມຄອງ ແລະ ນຳໃຊ້ຄ່າບໍລິການດັ່ງກ່າວ ໃຫ້ຖືກຕ້ອງສອດຄ່ອງຕາມເປົ້າໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້;
6. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ລາຍຮັບ-ລາຍຈ່າຍ ຄ່າບໍລິການດຳເນີນການແຈ້ງພາສີ ເປັນແຕ່ລະໄລຍະ (ເດືອນ, ງວດ ແລະ ສົກປີ) ໂດຍມີການສົມທຽບການບັນຊີ ກັບຄັງເງິນແຫ່ງຊາດ ສົ່ງໃຫ້ກະຊວງການເງິນຕາມລະບຽບການ.

**ມາດຕາ 10 : ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

ພະນັກງານ ແລະ ເຈົ້າໜ້າທີ່ພາສີ ທີ່ຈັດຕັ້ງປະຕິບັດລະບຽບການຄຸ້ມຄອງ ແລະ ນຳໃຊ້ເງິນຄ່າບໍລິການດຳເນີນການແຈ້ງພາສີ ຢ່າງເຂັ້ມງວດ, ມອບເງິນເຂົ້າໃນບັນຊີຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຈະໄດ້ຮັບນະໂຍບາຍ ຕາມລະບຽບການກຳນົດ.

ສຳລັບຜູ້ທີ່ລະເມີດລະບຽບການ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 11 : ການຈັດຕັ້ງປະຕິບັດ**

ມອບໃຫ້ກົມພາສີ ອອກບົດແນະນຳ ກ່ຽວກັບວິທີການ, ຂັ້ນຕອນ ການດຳເນີນງານໃນການຄຸ້ມຄອງບັນຊີ ລາຍຮັບ-ລາຍຈ່າຍ ຄ່າບໍລິການດຳເນີນການແຈ້ງພາສີ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ລັດຖະການພາສີແຕ່ລະຂັ້ນ ມີໜ້າທີ່ໂຄສະນາ, ເຜີຍແຜ່ ແລະ ແນະນຳ ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ນຳໄປຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 12 : ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ,

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ